PENGSISOMBOUN et al. (2022). Souphanouvong University Journal of Multidisciplinary Research and Development, ISSN 2521-0653. Volume 8. Issue 1. Jan – Jun 2022. Page 144 - 153

# ສຶກສາການກະຈາຍ ແລະ ສະພາບການຖິ້ມຂີ້ເຫຍື້ອຊະຊາຍໃນອ່າງຮັບນ້ຳ ຫ້ວຍໝາກຮຽວ, ນະຄອນຫຼວງວຽງຈັນ

**ສຸວັນນາ ແພງສີສົມບູນ[1,*], ເພັດພູມິນ ປະພາພັນ[2], ລັດທະລັກ ກັນຍາວົງ[1], ແນນຊີ ພົງທະດີ[1], ວັດທະນາມີໄຊ ຈັນຊົມພູ[3] ແລະ ພົງໄພບູນ ພອນປະເສີດ[2]**

*ພາກວິຊາການຈັດການສິ່ງແວດລ້ອມ, ຄະນະວິທະຍາສາດສິ່ງແວດລ້ອມ, ມະຫາວິທະຍາໄລແຫ່ງຊາດ, ສປປ ລາວ*

[1,*] **ຜູ້ຕິດຕໍ່ພົວພັນ:**

*ສຸວັນນາ ແພງສີສົມບູນ,*
*ພາກວິຊາການຈັດການສິ່ງແວດລ້ອມ,*
*ຄະນະວິທະຍາສາດສິ່ງແວດລ້ອມ*
*ມະຫາວິທະຍາໄລແຫ່ງຊາດ,*
*ເບີໂທ: 020 2221 7798,*
*ອີເມວ:*
souvanna2011@gmail.com

[2] *ພາກວິຊາເຕັກໂນໂລຊີສິ່ງແວດລ້ອມ, ຄະນະວິທະຍາສາດສິ່ງແວດລ້ອມ, ມະຫາວິທະຍາໄລແຫ່ງຊາດ*

[3] *ພາກວິຊາວາງແຜນພັດທະນາ, ຄະນະວິທະຍາສາດສິ່ງແວດລ້ອມ, ມະຫາວິທະຍາໄລແຫ່ງຊາດ*

*ຂໍ້ມູນບົດຄວາມ:*
*ການສົ່ງບົດຄວາມ: 16 ທັນວາ 2021*
*ປັບປຸງສຳເລັດ: 4 ເມສາ 2022*
*ການຕອບຮັບ: 25 ເມສາ 2022*

## ບົດຄັດຫຍໍ້

ສະພາບການຖິ້ມຂີ້ເຫຍື້ອແບບຊະຊາຍ ແມ່ນເປັນບັນຫາທີ່ພົບເຫັນເປັນປະຈຳ ແລະ ຫຼາຍໆຈຸດໃນຂອບເຂດ ນະຄອນຫຼວງວຽງຈັນ ແມ່ນມີລັກສະນະການຖິ້ມແບບຊະຊາຍຢູ່ຫຼາຍເຂດ. ການສຶກສາການກະຈາຍຂອງການຖິ້ມຂີ້ເຫຍື້ອແບບຊະຊາຍໃນຄັ້ງນີ້ ມີ 2 ຈຸດປະສົງຄື: 1). ສຶກສາການກະຈາຍ ແລະ ສະພາບການຖິ້ມຂີ້ເຫຍື້ອແບບຊະຊາຍຂອງປະຊາຊົນ, 2). ສຶກສາປະລິມານ ແລະ ປະເພດຂີ້ເຫຍື້ອທີ່ພົບເຫັນ. ສຳລັບວິທີການສຶກສາການກະຈາຍ ແລະ ສະພາບການຖິ້ມຄັ້ງນີ້ ແມ່ນໄດ້ໃຊ້ວິທີການສຳຫຼວດຕົວຈິງຕາມຈຸດຂີ້ເຫຍື້ອທີ່ພົບເຫັນ ໂດຍການກຳນົດຈຸດສຳຫຼວດຕາມພື້ນທີ່ເປົ່າຫວ່າງທີ່ຄາດວ່າຈະມີການຖິ້ມຂີ້ເຫຍື້ອ ແລະ ຕາມແຄມນ້ຳເປັນຕົ້ນ. ການວິເຄາະຫາປະລິມານຂີ້ເຫຍື້ອແມ່ນໄດ້ໃຊ້ວິທີການປະເມີນຄວາມກວ້າງ, ຄວາມຍາວ ແລະ ຄວາມສູງ ແລະ ຈັດອັນດັບ 3 ປະເພດຂີ້ເຫຍື້ອທີ່ພົບເຫັນຕໍ່ຈຸດ ເພື່ອຄຳນວນເປີເຊັນຂອງປະເພດຂີ້ເຫຍື້ອທີ່ພົບເຫັນຂອງແຕ່ລະປະເພດຂີ້ເຫຍື້ອທັງໝົດ.

ຜົນການສຶກສາ ໄດ້ພົບວ່າ ສະພາບການຖິ້ມຂີ້ເຫຍື້ອແບບຊະຊາຍທັງໝົດ 155 ຈຸດ, ກະຈາຍຕາມເສັ້ນທາງ, ແຄມຮ່ອງນ້ຳ, ແລະ ດິນເປົ່າຫວ່າງລະຫວ່າງບ້ານຕໍ່ບ້ານ. ສະພາບຂອງຂີ້ເຫຍື້ອສ່ວນຫຼາຍເປັນຂີ້ເຫຍື້ອຈາກຄົວເຮືອນທີ່ບໍ່ມີການຄັດແຍກຂີ້ເຫຍື້ອ ແລະ ບາງຈຸດມີຮ່ອງຮອຍຂອງການຈູດ. ປະລິມານຂອງຂີ້ເຫຍື້ອທີ່ພົບເຫັນມີທັງໝົດ 885.868 ແມັດກ້ອນ, ຂະໜາດຄວາມກວ້າງສະເລ່ຍ 2.42 ແມັດ, ຂະໜາດຄວາມຍາວສະເລ່ຍ 5.14 ແມັດ, ຂະໜາດຄວາມສູງສະເລ່ຍ 0.27 ແມັດ ແລະ ບໍລິມາດສະເລ່ຍ 5.71 ແມັດກ້ອນ. ປະເພດຂີ້ເຫຍື້ອທີ່ພົບເຫັນຫຼາຍກ່ວາໝູ່ແມ່ນຖົງພລາສຕິກ 29.25%, ປະເພດອື່ນໆ 18.24%, ຕຸກເຄື່ອງດື່ມພົບ 11.83%, ຖົງແຜ່ນພາສຕິກອື່ນໆ 9.68%, ເຄື່ອງຫໍ່ອາຫານ (ເຂົ້າໜົມ, ຢາສູບ) 8.60%, ຈອກ ຖ້ວຍ ແລະ ຈານ 8.39%, ຜ້າອ້ອມ 7.09%, ກ່ອງໃສ່ອາຫານ 4.52%, ຕຸກພລາສຕິກອື່ນໆ (ກ່ອງຢາສະຜົມ,ຖົງແຟັບ,ນ້ຳມັນ ແລະ ອື່ນໆ) 0.65%, ເຄື່ອງປະເພດຕັດ (ສ້ອມ, ມີດ, ບ່ວງ) 0.64%, ແຜ່ນແພ/ເຄື່ອງນຸ່ງ 0.22% ຕາມລຳດັບ ແລະ ບໍ່ພົບເຫັນຂີ້ເຫຍື້ອປະເພດອຸປະກອນຫາປາ, ສາເຫດທີ່ພາໃຫ້ເກີດການຖິ້ມຂີ້ເຫຍື້ອຊະຊາຍແມ່ນມາຈາກຄວາມບໍ່ເຂົ້າໃຈຕໍ່ກັບບັນຫາຫຼືຜົນກະທົບຈາກຂີ້ເຫຍື້ອ, ການຈັດການຂີ້ເຫຍື້ອບໍ່ມີປະສິດທິພາບ ແລະ ບໍ່ທົ່ວເຖິງ.

**ຄຳສັບສຳຄັນ:** *ຈຸດການກະຈາຍ, ຂີ້ເຫຍື້ອ, ການຖິ້ມຂີ້ເຫຍື້ອຊະຊາຍ, ປະເພດຂີ້ຫຍື້ອ*

# Study of Spatial Distribution and Characteristics of Littering Spots in Houy-Markhiew Watershed, Vientiane Capital

**Souvanna Pengsisomboun[1*], Phetphoumin Paphaphanh[2], Lodtharluk Kunyalong[1], Nansy Phongthady[1], Vathanamixay Chansompou[3] and Phongphaiboun Phonpaserd[2]**

*Department of Environmental Management, Faculty of environmental Science, National University of Lao, Lao PDR*

***[1,*] Correspondence:***

*Souvanna Pengsisomboun,*

*Department of Environmental Management, Faculty of environmental Science, National University of Laos, Tel: +856 20 2221 7798,*

*E-mail:*

*souvanna2011@gmail.com*

*[2]Department of Environmental Technology, Faculty of environmental Science, National University of Laos*

*[3] Department of Environmental Development, Faculty of environmental Science, National University of Laos*

***Article Info:***
*Submitted: Dec 16, 2021*
*Revised: Apr 04, 2022*
*Accepted: Apr 25, 2022*

**Abstract**

The situation of littering spot is the common problem and many places in Vientiane Capital has littering spot in many area. The aims of this study are: 1). to study the spatial distribution and characteristics of people's littering, 2). To study the amount and type of waste founded. GPS Survey and visual interpretation was investigated for spatial distribution and characteristics of each littering. The amount of waste ware estimated width, length and height of the garbage in term of volume. However, waste types ordered in to 3 ranks, 1 order of garbage is found per point to calculate the percentage of the type of garbage found for each type of garbage.

The result of the study ware found that a total of 155 points of reckless dumping scattered along roads, along streams, and vacant land between villages. The condition of most of the garbage is household waste that has not been sorted and some places have scar of the burning. The volume of spam found all 885.868 cubic meters, width average 2.42 meters, length average 5.14 meters, height average 0.27 meters and average volume 5.71 cubic meters. The waste type ware found Grocery bags, Other, beverage bottle, Other plastic bags and sheet, food wrapper and sachet (candy, chips, tobacco, ketchup), cup and plate, diaper, take out/away container, rope, other plastic bottles (shampoos, detergents, oil, bleach, etc.), cutleries (straws, stirrers, forks, knives, spoons, chopsticks), Textile/Clothes and Fishing gear 29.25%, of the 18.24%, bottle drinks found 11.83%, bags, sheet plastic and other 9.68%, wrapping food (candy, tobacco) 8.60%, glass plates and cups 8.39%, diapers 7.09%, food boxes 4.52%, other plastic bottles (boxes, hair, coffee bags, oil, etc.) 0.65%, cutting tools (forks, knives, spoons) 0.64%, textiles clothing 0.22%, respectively, and no litter to dispose of litter or trash can, no trash to cause.

**Keyword:** *Spatial distribution, Waste, littering spot, Type of waste*

## 1. ພາກສະເໜີ

ປັດຈຸບັນການຈະເລີນເຕີບໂຕທາງດ້ານເສດຖະກິດ-ສັງຄົມກໍ່ຄື: ພາກອຸດສາຫະກໍາ, ກະສິກໍາ, ຈໍານວນປະຊາກອນທີ່ເພີ່ມຂຶ້ນ ແລະ ວິຖີຊີວິດການເປັນຢູ່ຂອງປະຊາຊົນມີການປ່ຽນແປງໄປໂດຍສະເພາະແມ່ນ ທີ່ຢູ່ອາໄສ, ການອຸປະໂພກ-ບໍລິໂພກ, ອາຫານການກິນ ແລະ ສິ່ງຂອງອໍານວຍຄວາມສະດວກຕໍ່ຊີວິດປະຈໍາວັນຄວາມຫຼາກຫຼາຍເປັນເຫດເຮັດໃຫ້ຂີ້ເຫຍື້ອມີປະລິມານຫຼາຍຂຶ້ນ. ພ້ອມດຽວກັນນັ້ນ, ການຈັດການຂີ້ເຫຍື້ອດັ່ງກ່າວແມ່ນບໍ່ມີປະສິດທິພາບ ແລະ ບໍ່ທົ່ວເຖິງເຮັດໃຫ້ມີຂີ້ເຫຍື້ອຕົກຄ້າງຫຼາຍຂຶ້ນ ແລະ ໄດ້ສິ່ງຜົນກະທົບຕໍ່ສິ່ງແວດລ້ອມທັງທາງນໍ້າ, ທາງດິນ ແລະ ທາງອາກາດ, ສິ່ງຜົນກະທົບຕໍ່ສຸຂະອະນາໄມຂອງປະຊາຊົນບໍ່ວ່າທາງກົງ ຫຼື ທາງອອ້ມເຮັດໃຫ້ປະຊາຊົນສ່ຽງຕໍ່ການຕິດເຊື້ອພະຍາດທີ່ເກີດຈາກຂີ້ເຫຍື້ອ ແລະ ສິ່ງຜົນກະທົບຕໍ່ເສດຖະກິດ-ສັງຄົມໃນການຈັດການຂີ້ເຫຍື້ອ ເຊັ່ນ: ເກັບຂົນບໍ່ດີ, ບໍ່ໝົດ, ກໍາຈັດບໍ່ໄດ້ດີເຮັດໃຫ້ສະຖານ ທີ່ນັ້ນໆເກີດຄວາມບໍ່ງາມ, ແລະ ສິ່ງຜົນກະທົບຕໍ່ການທ່ອງທ່ຽວ (ກົມສົ່ງເສີມຄຸນນະພາບສິ່ງແວດລ້ອມ, 2009; ສອນພະນົມ ແສງທະວິເດດ, 2013 ແລະ Souksavath et al, 2008).

ນະຄອນຫຼວງວຽງຈັນ ເປັນເມືອງຫຼວງຂອງ ສປປ ລາວ, ມີປະຊາກອນອາໄສຢູ່ຢ່າງໜາແໜ້ນ ແລະ ມີທ່າອຽງເພີ່ມຂຶ້ນເລື້ອຍໆ, ທີ່ສໍາຄັນ ນະຄອນຫຼວງວຽງຈັນ ເປັນເມືອງທ່ອງທ່ຽວທີ່ຫຼາຍຄົນສົນໃຈເຂົ້າມາທ່ຽວຊົມ. ສະນັ້ນ, ຈິ່ງເຮັດໃຫ້ ນະຄອນຫຼວງວຽງຈັນ ເປັນສູນກາງທາງດ້ານການເມືອງ, ການປົກຄອງ, ການສຶກສາ, ດ້ານສາທາລະນະສຸກ, ເສດຖະກິດ-ສັງຄົມ ຕະຫຼອດຈົນຮອດວັດທະນະທໍາ. ຈາກການລາຍງານຂອງ ຫ້ອງການຄຸ້ມຄອງ ແລະ ບໍລິຫານຕົວເມືອງວຽງຈັນ ປີ 2021 ໃນຊ່ວງປີ 2019 ຫາ 2020 ປະລິມານຂີ້ເຫຍື້ອໃນ ນະຄອນຫຼວງວຽງຈັນ ເພີ່ມຂຶ້ນ 277,486 ໂຕນ ເທົ່າກັບ 1.88%, ມີພຽງແຕ່ 31.32% ຂອງຫຼັງຄາເຮືອນທີ່ໃຊ້ບໍລິການເກັບມ້ຽນຂີ້ເຫຍື້ອ ແລະ ບໍ່ໃຊ້ບໍລິການເກັບມ້ຽນຂີ້ເຫຍື້ອ 68.68% ຂອງຫຼັງຄາເຮືອນ (ອພບຕ, 2021). ອ່າງຮັບນໍ້າຫ້ວຍໝາກຮຽວ ມີເນື້ອທີ່ປະມານ 989,823 ກິໂລຕາແມັດ, ເປັນອ່າງຮັບນໍ້າເສຍຂອງຕົວເມືອງ ນະຄອນຫຼວງວຽງຈັນ ໄຫຼລົງສູ່ແມ່ນໍ້າຂອງກວມພື້ນທີ່ທັງໝົດຂອງ 5 ເມືອງ, 299 ບ້ານຄື: ເມືອງຈັນທະບູລີ ມີ ມີທັງໝົດ 30 ບ້ານ, ເມືອງສີໂຄດຕະບອງ ມີ 60 ບ້ານ, ເມືອງ ໄຊເສດຖາ ມີ 48 ບ້ານ, ເມືອງສີສັດຕະນາກມີ 37 ບ້ານ, ເມືອງຫາດຊາຍຟອງ 60 ບ້ານ ແລະ ຂອບພື້ນທີ່ບາງສ່ວນຂອງ ເມືອງສັງທອງ 4 ບ້ານ, ເມືອງນາຊາຍທອງ 1 ບ້ານ, ເມືອງໄຊທານີ 34 ບ້ານ ແລະ ເມືອງປາກງື່ມ 25 ບ້ານ. ສະນັ້ນ, ເມື່ອມີການຖິ້ມຂີ້ເຫຍື້ອຊະຊາຍໃນເຂດອ່າງຮັບນໍ້າຫວ້ຍໝາກຮຽວ ກໍ່ຈະມີໂອກາດເຮັດໃຫ້ມີຂີ້ເຫຍື້ອຕົກຄ້າງຕາມຫວ້ຍ, ຮ່ອງ, ຄອງ, ບຶງ ຫຼາຍຂຶ້ນ ແລະ ໄຫຼລົງສູ່ແມ່ນໍ້າຂອງ.

ຈາກບັນຫາດັ່ງກ່າວ, ພົບວ່າຍັງມີການຖິ້ມຂີ້ເຫຍື້ອແບບຊະຊາຍຂອງປະຊາຊົນຕາມພື້ນທີ່ຕ່າງໆໃນ ນະຄອນຫຼວງວຽງຈັນ. ດັ່ງນັ້ນ, ຈິ່ງໄດ້ກໍານົດຫົວຂໍ້ການສຶກສາດັ່ງກ່າວນີ້ຂຶ້ນມາ ເພື່ອໃຫ້ຮູ້ເຖິງຈຸດການກະຈາຍ, ສະພາບການຖິ້ມຂີ້ເຫຍື້ອ, ປະລິມານ ແລະ ປະເພດຂີ້ເຫຍື້ອໃນພື້ນທີ່ຕ່າງໆ, ເພື່ອເປັນຂໍ້ມູນອ້າງອີງໃຫ້ພາກສ່ວນຕ່າງທີ່ກ່ຽວຂ້ອງໃນການກໍານົດນະໂຍບາຍ, ວາງມາດຕະການ, ວາງແຜນການຄຸ້ມຄອງການຖິ້ມຂີ້ເຫຍື້ອແບບຊະຊາຍໃຫ້ເໝາະສົມ ແລະ ເປັນລະບົບຢ່າງຖືກວິທີ.

## 2. ອຸປະກອນ ແລະ ວິທີການ

### 2.1 ອຸປະກອນການສຶກສາ

- ໂປຣແກມ A-GPS
- ກ້ອງຖ່າຍຮູບ
- ຄອມພິວເຕີ, ໂທລະສັບ
- ໄມ້ແມັດ, ຖົງຢາງ, ຖົງມື, ແລະ ຜ້າອັດປາກ

### 2.2 ວິທີການສຶກສາ

ການສຶກສາຄັ້ງນີ້ ແມ່ນໃຊ້ວິທີການສໍາຫຼວດຕາມເສັ້ນທາງຫຼັກ, ເສັ້ນທາງເຊື່ອມຕໍ່ລະຫວ່າງເສັ້ນທາງຫຼັກ ແລະ ເສັ້ນທາງຕັດໃໝ່ (ຮູບທີ 1), ວາງແຜນເສັ້ນທາງຈຸດທີ່ເນັ້ນສໍາຫຼວດແມ່ນເສັ້ນທາງແມ່ນໍ້າຂອງ, ຈຸດທີ່ມີແມ່ນໍ້າ, ເສັ້ນທາງທີ່ມີດິນເປົ່າວ່າງ, ທາງຮ່ອມບ້ານ, (ທີ່ຄາດວ່າຈະມີການຖິ້ມຂີ້ເຫຍື້ອ), ໂດຍໃຊ້ Garmin GPSMAP 65S ເປັນເຄື່ອງມືໃນການບັນທຶກຈຸດຖິ້ມຂີ້ເຫຍື້ອຊະຊາຍທີ່ພົບເຫັນ ເພື່ອສ້າງແຜນທີ່ການກະຈາຍຂອງຂີ້ເຫຍື້ອໂດຍນໍາໃຊ້ໂປແກມ QGIS, ສະພາບຂອງການຖິ້ມຂີ້ເຫຍືອແມ່ນໃຊ້

ວິທີການສັງເກດລັກສະນະການຖິ້ມ, ປະເພດຂອງຂີ້ເຫຼື້ອທີ່ພົບ, ຖ່າຍຮູບດ້ວຍກ້ອງຖ່າຍຮູບ (Nikon 4300) ແລະ ສະຫຼຸບສັງລວມ.

ການສຶກສາປະລິມານຂີ້ເຫຍື້ອ ແມ່ນໃຊ້ວິທີການປະເມີນຂະໜາດຄວາມກວ້າງ, ຍາວ ແລະ ຄວາມສູງຂອງກອງຂີ້ເຫື້ອເພື່ອປະເມີນຂະໜາດກອງຂີ້ເຫຍື້ອ ແລະ ບໍລິມາດທັງໝົດຂອງຂີ້ເຫຍື້ອທີ່ພົບເຫັນ. ເຊິ່ງໄດ້ຈັດອັນດັບປະເພດຂອງຂີ້ເຫຍື້ອທີ່ພົບເຫັນຕາມ 13 ປະເພດຂີ້ເຫຼຍື້ອ ຕາມຮູບແບບຟອມປະເມີນປະເພດຂີ້ເຫຍື້ອຂອງ UNEP Waste Audit ຄື: 1). ເຄື່ອງບັນຈຸອາຫານ (ຖົງເຂົ້າໜົມ, ຊອງຢາສູບ), 2). ກ່ອງໃສ່ອາຫານ, 3). ຈອກ, ຖ້ວຍ, ຈານ, 4). ເຄື່ອງປະເພດຕັດ (ສ້ອມ, ມີດ, ບ່ວງ), 5). ຕຸກເຄື່ອງດື່ມ, 6). ຕຸກພາລສຕິກອື່ນໆ (ກ່ອງຢາສະຜົມ, ຕຸກນ້ຳມັນ ແລະ ຖົງແຟັບ), 7). ຖົງພາລສຕິກ (ຖົງຫິ້ວ), 8). ຖົງ ແລະ ແຜ່ນພາລສຕິກອື່ນໆ, 9). ອຸປະກອນຫາປາ, 10). ເຊືອກ, 11). ຜ້າອ້ອມ, 12). ແຜ່ນແພ/ເຄື່ອງນຸ່ງ, ແລະ 13). ປະເພດອື່ນໆ (ຝາຕຸກນ້ຳ, ກ່ອງໂຟມ, ຈອກມີ່, ຖົງແຟັບ, ແກັດເຈ້ຍ, ຢາງລົດ). ໂດຍການຈັດອັນດັບອອກເປັນ 3 ອັນດັບຄື: ປະເພດຂີ້ເຫຍື້ອທີ່ພົບເຫັນຫຼາຍທີ່ສຸດຈັດປະເພດເປັນອັນດັບທີ 1, ຮອງລົງມາຈັດເປັນອັນດັບທີ 2 ແລະ ອັນດັບທີ 3 ຕາມລຳດັບ ຂອງແຕ່ລະກອງຂີ້ເຫຍື້ອ ຫຼັງຈາກນັ້ນ, ຄຳນວນຫາຄ່າສະເລ່ຍ ແລະ ເປີເຊັນຂອງແຕ່ລະອັນດັບຂອງປະເພດຂີ້ເຫຍື້ອ.

## 3. ຜົນໄດ້ຮັບ

### 3.1 ຈຸດທີ່ພົບການຖິ້ມຂີ້ເຫຍື້ອ

ຜົນການສຳຫຼວດພົບວ່າຈຸດຖິ້ມຂີ້ເຫຍື້ອແບບຊະຊາຍທັງໝົດ 155 ຈຸດ. ໃນນັ້ນ, ເສັ້ນທາງທີ່ຜ່ານເມືອງໄຊເສດຖາພົບເຫັນ 41 ຈຸດ ເທົ່າກັບ 26%, ເມືອງສີໂຄດຕະບອງ 35 ຈຸດ ເທົ່າກັບ 23%, ເມືອງຈັນທະບູລີ 35 ຈຸດ ເທົ່າກັບ 23%, ເມືອງຫາດຊາຍຟອງ 29 ຈຸດ ເທົ່າກັບ 19%, ເມືອງສີສັດຕະນາກ 6 ຈຸດ ເທົ່າກັບ 4%, ເມືອງປາກງື່ມ 4 ຈຸດ ເທົ່າກັບ 3%, ເມືອງໄຊທານີ 3 ຈຸດ ເທົ່າກັບ 2%, ເມືອງນາຊາຍທອງ 2 ຈຸດ ເທົ່າກັບ 1% ແລະ ເມືອງສັງທອງບໍ່ພົບເຫັນຂີ້ເຫຍື້ອຕາມແຄມທາງ (ຮູບທີ 02).

ໃນເຂດທີ່ພົບການຖິ້ມເຫັນຫຼາຍກວ່າໝູ່ແມ່ນເມືອງໄຊເສດຖາ 41 ຈຸດ, ກວມເອົາ 26% ໃນບັນດາເຂດທີ່ໄປມາ,ຮອງລົງມາ 2 ເມືອງຄື: ເມືອງຈັນທະບູລີ ແລະ ເມືອງສີໂຄດຕະບອງ ເທົ່າກັນມີ 35 ຈຸດ, ກວມເອົາ 23%, ສ່ວນເມືອງທີ່ພົບຕ່ຳກວ່າ 10 ຈຸດ ລົງໄປຄື: ເມືອງສີສັດຕະນາກ, ເມືອງນາຊາຍທອງ, ເມືອງໄຊທານີ, ເມືອງປາກງື່ມ ແລະ ເມືອງທີ່ບໍ່ພົບແມ່ນ ເມືອງສັງທອງ. (ຕາຕະລາງ 01) ສາເຫດທີ່ບໍ່ພົບຈຸດຖິ້ມຂີ້ເຫຍື້ອ ແລະ ເມືອງທີ່ມີຫຼາຍ-ເມືອງທີ່ມີໜ້ອຍ ຍ້ອນບໍ່ທັນໄດ້ໄປທຸກເສັ້ນທາງໃນຕົວເມືອງ ແລະ ເຂດເສັ້ນທາງດົງໜາກຄາຍຍ້ອນມີເວລາຈຳກັດສຳລັບຂອບເຂດທີ່ເຮົາໄປແມ່ນບໍ່ພົບເຫັນ.

### 3.2 ປະລິມານຂີ້ເຫຍື້ອທີ່ພົບເຫັນ

ປະລິມານຂີ້ເຫຍື້ອທີ່ພົບເຫັນທັງໝົດ 826.768 ແມັດກ້ອນ, ເຊິ່ງມີຂະໜາດຄວາມກວ້າງສະເລ່ຍ 2.51 ແມັດ, ຂະໜາດຄວາມຍາວສະເລ່ຍ 4.79 ແມັດ, ຂະໜາດຄວາມສູງສະເລ່ຍ 0.27 ແມັດ ແລະ ບໍລິມາດສະເລ່ຍ 5.33 ແມັດກ້ອນ. ປະລິມານ 0-3 ແມັດກ້ອນ ແມ່ນມີ 111 ຈຸດ ຄິດໄລ່ປະລິມານສະເລ່ຍ 72%, ຊ່ວງທີ 2 ຈາກຄ່າຂອງ 3-15 ແມັດກ້ອນ ມີ 30 ຈຸດ ປະລິມານສະເລ່ຍ 19% ແລະ ຊ່ວງທີ 3 ມີຄ່າ >15 ແມັດກ້ອນ ຂຶ້ນໄປທັງໝົດ 14 ຈຸດ ປະລິມານສະເລ່ຍ 9%.

ປະເພດຂີ້ເຫຍື້ອທີ່ພົບເຫັນຫຼາຍກວ່າໝູ່ແມ່ນຖົງພລາສຕິກ 29.25%, ປະເພດອື່ນໆ 18.24%, ຕຸກເຄື່ອງດື່ມພົບ 11.83%, ຖົງແຜ່ນພາສຕິກອື່ນໆ 9.68%, ເຄື່ອງຫໍ່ອາຫານ (ເຂົາໜົມ, ຢາສູບ) 8.60%, ຈອກ ຖ້ວຍ ແລະ ຈານ 8.39%, ຜ້າອ້ອມ 7.09%, ກ່ອງໃສ່ອາຫານ 4.52%, ຕຸກພລາສຕິກອື່ນໆ (ກ່ອງຢາສະຜົມ, ຖົງແຟັບ, ນ້ຳມັນ ແລະ ອື່ນໆ) 0.65%, ເຄື່ອງປະເພດຕັດ (ສ້ອມ, ມີດ, ບ່ວງ) 0.64%, ແຜ່ນແພ/ເຄື່ອງນຸ່ງ 0.22% ຕາມລຳດັບ ແລະ ບໍ່ພົບເຫັນຂີ້ເຫຍື້ອປະເພດອຸປະກອນຫາປາ.

### 3.3 ປະເພດຂີ້ເຫຍື້ອທີ່ພົບເຫັນ

#### 3.3.1 ປະເພດຂີ້ເຫຍື້ອທີ່ພົບເຫັນອັນດັບ 1

ຄວາມຖີ່ຂອງປະເພດຂີ້ເຫຍື້ອທີ່ພົບເຫັນອັນດັບ 1 ພົບວ່າ: ຖົງພລາສຕິກພົບເຫັນທັງຫມົດ 80 ຈຸດ 51.6%, ປະເພດອື່ນໆ 25 ຈຸດ 16.1%, ຕຸກເຄື່ອງດື່ມພົບ 17 ຈຸດ 11.0%, ຖົງແຜ່ນພາສຕິກອື່ນໆ 14 ຈຸດ 9.0%, ຜ້າອ້ອມ

7 ຈຸດ 4.5%, ເຄື່ອງຫໍ່ອາຫານ (ເຂົ້າໜົມ, ຢາສູບ) 5 ຈຸດ 3.2%, ຈອກ, ຖ້ວຍ ແລະ ຈານ 4 ຈຸດ 2.6%, ກ່ອງໃສ່ອາຫານ 2 ຈຸດ 1.3%, ຕຸກພລາສຕິກອື່ນໆ (ກ່ອງຢາສະຜົມ, ຖົງແຟັບ, ນ້ຳມັນ ແລະ ອື່ນໆ) 1 ຈຸດ 0.6%. (ດັ່ງເສັ້ນສະແດງໃນຮູບພາບທີ 04)

### 3.3.2 ປະເພດຂີ້ເຫຍື້ອທີ່ພົບເຫັນອັນດັບ 2

ຄວາມຖີ່ທີ່ພົບເຫັນອັນດັບ 2 ຖົງພາສຕິກ 41 ຈຸດ 25.45%, ປະເພດອື່ນໆ 25 ຈຸດ 14.92%, ເຄື່ອງຫໍ່ອາຫານ (ເຂົ້າໜົມ, ຢາສູບ) 22 ຈຸດ 13.20%, ຕຸກເຄື່ອງດື່ມ 19 ຈຸດ 12.26%, ຈອກ,ຖ້ວຍ ແລະ ຈານ 16 ຈຸດ 11.32%, ຜ້າອ້ອມ 15 ຈຸດ 10.86%, ຖົງ ແລະ ແຜ່ນພລາສຕິກອື່ນໆ 10 ຈຸດ 7.45%, ກ່ອງໃສ່ອາຫານ 5 ຈຸດ 3.25%, ສ້ອມ, ມີດ, ບ່ວງ 1 ຈຸດ 0.65%. (ດັ່ງເສັ້ນສະແດງໃນຮູບພາບທີ 04)

### 3.3.3 ປະເພດຂີ້ເຫຍື້ອທີ່ພົບເຫັນອັນດັບ 3

ຄວາມຖີ່ທີ່ພົບເຫັນອັນດັບ 3 ປະເພດອື່ນໆ 33 ຈຸດ 21.29%, ຕຸກເຄື່ອງດື່ມ 24 ຈຸດ 15.48%, ຜ້າອ້ອມ 21 ຈຸດ 13.55%, ຖົງ ແລະ ພາສຕິກອື່ນໆ 18 ຈຸດ 11.61%, ຈອກ, ຖ້ວຍ ແລະ ຈານ 16 ຈຸດ 10.32%, ຖົງພລາສຕິກ 15 ຈຸດ 9.68%, ເຄື່ອງຫໍ່ອາຫານ (ຖົງເຂົ້າໜົມ, ຊອງຢາສູບ) 14 ຈຸດ 9.03%, ກ່ອງໃສ່ອາຫານ 11 ຈຸດ 7.10%, ສ້ອມ, ມີດ, ບ່ວງ 2 ຈຸດ 1.29%, ຕຸກພລາສຕິກອື່ນໆ (ຕຸກຢາສະຜົມ, ຜົງຊັກຟອກ, ນ້ຳມັນ ແລະ ອື່ນໆ) 1 ຈຸດ 0.65%.

### 3.3.4 ຂີ້ເຫຍື້ອປະເພດອື່ນໆ

ຂີ້ເຫຍື້ອປະເພດອື່ນໆທີ່ພົບເຫັນລວມມີ 21 ປະເພດ ສ່ວນປະເພດທີ່ພົບເຫັນຫຼາຍກວ່າໝູ່ແມ່ນ ກ່ອງໂຟມ 21.69%, ແກ້ວ 10.84%, ຝາຕຸກນ້ຳ 10.84%, ກ່ອງນົມ 8.43%, ຢາງທໍ່ລະທັດ 8.43%, ຢາງຕີນລົດ 6.02%, ສາຍໄຟ 4.825, ຊຸດເຄື່ອງນອນ, ສາຍຫັດເປົາ, ແກັດເຈ້ຍ, ໂຟມຮໍ່ວັດສະດຸກໍ່ສ້າງ 3.61%, ຖົງແຟັບ 2.41%, ເສດເສື້ອ 2.41, ແຜ່ນຢີບຊໍ່າ, ຊາກພັດລົມ, ເສດກໍ່ສ້າງ, ເຄື່ອງອີເລັກໂທນິກ, ຊາກກະເບື້ອງ, ຈອກມີ່, ຢາງບັງແສງ, ເສດໄມ້ແມ່ນ 1.20% ເທົ່າກັນ. (ດັ່ງເສັ້ນສະແດງໃນຮູບພາບທີ 04)

## 4. ວິພາກຜົນ

ຈາກການສຳຫຼວດຈຸດຖິ້ມຂີ້ເຫຍື້ອແບບຊະຊາຍຂອງອ່າງຮັບນ້ຳ ຫ້ວຍໝາກຮຽວ ໃນຄັ້ງນີ້ ເຫັນໄດ້ວ່າຈຸດຂີ້ເຫຍື້ອແບບຊະຊາຍທີ່ພົບໃນ 155 ຈຸດ ນັ້ນມີການກະຈາຍໃນທຸກພື້ນທີ່ຂອງ 8 ຕົວເມືອງໃນ ນະຄອນຫຼວງວຽງຈັນ ມີພຽງ ເມືອງສັງທອງ ທີ່ບໍ່ພົບ. ໃນນຳຈອນ 155 ຈຸດ ເຫັນວ່າມີ 4 ເມືອງທີ່ພົບການຖິ້ມຊະຊາຍຫຼາຍກວ່າໝູ່ ຄື ເມືອງໄຊເສດຖາ ເຂດບ້ານໂຊກໃຫ່ຍ ເຊິ່ງປະຊາຊົນໃນເຂດນັ້ນແມ່ນສ່ວນຫຼາຍບໍ່ໄດ້ໃຊ້ບໍລິການຂົນສົ່ງຂີ້ເຫຍື້ອ; ຮອງລົງມາແມ່ນ ເມືອງສີໂຄດຕະບອງ ພົບເຫັນເຂດບ້ານໃໝ່, ບ້ານວຽງຄຳຈຳປາ (ທາງໄປຕາດມູນ) ປະຊາຊົນໃນເຂດນັ້ນສ່ວນຫຼາຍບໍ່ໄດ້ໃຊ້ບໍລິການ ແລະ ເມືອງຈັນທະບູລີ ພົບເຫັນເຂດບ້ານໜອງທາ, ບ້ານໂພນຕ້ອງ ທີ່ບໍ່ໄດ້ໃຊ້ບໍລິການ. ອັນດັບ 3 ແມ່ນເມືອງຫາດຊາຍຟອງ ພົບເຫັນເຂດ ບ້ານດົງຄຳຊ້າງ, ບ້ານໜອງໄຮ່ ປະຊາຊົນສ່ວນໃຫ່ຍແມ່ນບໍ່ໄດ້ໃຊ້ບໍລິການ ເຊິ່ງສອດຄ່ອງກັບການວິໃຈຂອງ ພັດທະກອນ ໂສພາວິໄລ (2012) ໄດ້ສຶກສາ ເຖິງປັດໃຈທີ່ມີຜົນຕໍ່ຄວາມພໍໃຈຈ່າຍໃນການຄຸ້ມຄອງຂີ້ເຫຍື້ອຢູ່ ເມືອງຫາດຊາຍຟອງ ນະຄອງຫຼວງວຽງຈັນ ໃຊ້ວິທີການປະເມີນຄ່າ CVM ເພື່ອຊອກຫາຄ່າຄວາມພໍໃຈຈ່າຍ. ຜົນການສຶກສາເຫັນວ່າ ຄົວເຮືອນສ່ວນຫຼາຍແມ່ນ ບໍ່ໄດ້ໃຊ້ການບໍລິການເທົ່າກັບ 81.52%, 68.31%, ຄົວເຮືອນທັງຫມົດແມ່ນຜະລິດຂີ້ເຫຍື້ອ 15-30 ກິໂລກຣາມ/ເດືອນ, ຄົວເຮືອນທີ່ແຍກກ່ອນການກຳຈັດແມ່ນມີ 60.72% ເຊິ່ງເຫັນໄດ້ວ່າ ປັດໃຈທີ່ມີຜົນຕໍ່ຄວາມພໍໃຈຈ່າຍໃນການເກັບມ້ຽນຂີ້ເຫຍື້ອມີ 3 ຕົວປ່ຽນທີ່ມີຄວາມສຳຄັນຄື: ປັດໃຈທາງດ້ານລາຍໄດ້ຖ້າລາຍໄດ້, ປັດໃຈຄວາມເປັນເຈົ້າຂອງທີ່ຢູ່ອາໄສ ແລະ ໄລຍະທາງຫ່າງລະຫວ່າງເຮືອນຫາໜ້າທາງ. ສະນັ້ນ, ເມື່ອສົມທຽບກັບການສຶກສາຜ່ານມາເຫັນວ່າມີຫຼາຍປັດໃຈທີ່ເຮັດໃຫ້ປະຊາຊົນເພິ່ງພໍໃຈ ແລະ ຍິນດີທີ່ຈະຈ່າຍຄ່າບໍລິການຂີ້ເຫຍື້ອ, ເຊິ່ງປັດໄຈລາຍຮັບຖືເປັນປັດໄຈຫຼັກ ຈຶ່ງເຮັດໃຫ້ປະຊາຊົນບໍ່ຕ້ອງການໃຊ້ບໍລິການຂີ້ເຫຍື້ອ ແຕ່ຈະເລືອກວິທີການກຳຈັດດ້ວຍໂຕເອງ ຄືການຈູດ ແລະ ການຖິ້ມຊະຊາຍຕາມພື້ນທີ່ເປົ່າວ່າງເປັນສ່ວນໃຫຍ່. ເນື່ອງຈາກວ່າ ຜູ້ທີ່ມີລາຍຮັບສະເລ່ຍສູງແມ່ນ ຈະເປັນບຸກຄົນທີ່ມີລະດັບການ

PENGSISOMBOUN et al. (2022). Souphanouvong University Journal of Multidisciplinary Research and Development, ISSN 2521-0653. Volume 8. Issue 1. Jan – Jun 2022. Page 144 - 153

ສຶກສາສູງ, ມີປະສົບການ ແລະ ໄດ້ມີການໄປແລກປ່ຽນຢູ່ຕ່າງປະເທດເລື້ອຍໆ, ສໍາລັບຜູ້ທີ່ມີລາຍຮັບຕໍ່າແມ່ນຢາກຫຼຸດຜ່ອນຄ່າໃຊ້ຈ່າຍຂອງຄອບຄົວ ແລະ ເປັນບຸກຄົນທີ່ມີຄວາມຮັບຜິດຊອບ, ມີຈິດສໍານຶກຕໍ່ສິ່ງແວດລ້ອມສູງ, ໃນຂະນະທີ່ ຄອບຄົວທີ່ມີລາຍຮັບປານກາງ ຍັງຂາດຄວາມຮັບຜິດຊອບ ແລະ ຈິດສໍານຶກຕໍ່ສິ່ງແວດລ້ອມຍັງບໍ່ໄດ້ດີເທົ່າທີ່ຄວນ.

ການຖິ້ມຂີ້ເຫຍື້ອສ່ວນຫຼາຍແມ່ນມາຈາກຄົວເຮືອນຂອງປະຊາຊົນ ມີລັກສະນະແບບກະຈາຍໄປແຕ່ລະພື້ນທີ່, ເນື່ອງມາຈາກການນໍາໃຊ້ ຫຼືເຄື່ອນໄຫວກິດຈະກໍາຂອງປະຊາຊົນແມ່ນຕ້ອງບໍລິໂພກ ແລະ ອຸປະໂພກຈຶ່ງເກີດມີຂີ້ເຫຍື້ອຕາມມາ, ບາງເຂດແມ່ນຢູ່ຫ່າງໄກຈາກເສັ້ນທາງຫຼັກ ແລະ ການບໍລິການຍັງບໍ່ທັນເຂົ້າເຖິງ. ລັກສະນະຂອງການຖິ້ມຂີ້ເຫຍື້ອແມ່ນແບບຊະຊາຍຕາມແຄມທາງທີ່ຫ່າງຈາກຊຸມຊົນ, ແຄມນໍ້າ, ດິນເປົ່າຫວ່າງທົ່ວໄປ, ດິນວ່າງແຄມທາງໃຫຍ່, ປ່າເລົ່າແຄມທາງ ແລະ ສ່ວນຫຼາຍຈະພົບເຫັນຕາມທາງຮ່ອມບ້ານ; ໃນການສໍາຫຼວດຕົວຈິ່ງເຫັນວ່າ ປະເພດຂີ້ເຫຍື້ອທີ່ພົບຫຼາຍທີ່ສຸດ ແມ່ນຖົງພລາສຕິກພົບເຫັນທັງຫມົດ 80 ຈຸດ ໂດຍສະເພາະແມ່ນຖົງຫິ້ວພລາສຕິກສີ, ຖົງບັນຈຸອາຫານ, ຂະໜົມ ແລະ ກ່ອງໂຟມຊະນິດໃຊ້ຄັ້ງດຽວແລ້ວຖິ້ມ, ເຊິ່ງເຫັນໄດ້ວ່າການຊົມໃຊ້ຜະລິດຕະພັນຈໍາພວກພລາສຕິກໃນນະຄອນຫຼວງວຽງຈັນ ແມ່ນມີຫຼາຍ ແຕ່ຍັງຂາດຄວາມຮູ້ຄວາມເຂົ້າໃຈໃນການຈັດການຂີ້ເຫຍື້ອຢ່າງຖືກວິທີ, ຈຶ່ງເຮັດໃຫ້ບັນຫາການຖິ້ມຂີ້ເຫຍື້ອຊະຊາຍ ຍັງພົບເຫັນໃນຫຼາຍພື້ນທີ່ໃນນະຄອນຫຼວງວຽງຈັນ. ແຕ່ຖ້າຫາກປະຊະຊົນຫັນມານໍາໃຊ້ວິທີການແຍກຂີ້ເຫຍື້ອ ເພື່ອເປັນທາງເລືອກໃນການຈັດການສິ່ງເສດເຫຼືອແບບຍືນຍົງໄດ້ແມ່ນຈະສາມາດຊ່ວຍໃຫ້ເຂົາເຈົ້າຫຼຸດຜ່ອນປະລິມານຂີ້ເຫຍື້ອໄດ້ເຊັ່ນກັນ, ດັ່ງການສຶກສາຂອງ ພຸດມະນີ ສີອໍາພອນ (2019). ການຈັດການຂີ້ເຫຍື້ອຄົວເຮືອນແບບຍືນຍົງ ໃນນະຄອນຫຼວງວຽງຈັນ ໄດ້ສຶກສາບັນດາຮູບແບບໃນການຈັດການຂີ້ເຫຍື້ອ ໃຫ້ແກ່ປະຊາຊົນບ້ານສີຖານເໜືອ, ເມືອງສີໂຄດຕະບອງ ແລະ ບ້ານດົງຄໍາຊ້າງ, ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ ເພື່ອວິເຄາະຕົ້ນທຶນ ແລະ ລາຍຮັບຂອງການຈັດການແຕ່ລະຮູບແບບເພື່ອເປັນທາງເລືອກຂອງຊຸມຊົນ ແລະ ປະເມີນຄວາມພໍໃຈຈ່າຍຄ່າບໍລິການໃນການຈັດການຂີ້ເຫຍື້ອຂອງປະຊາຊົນໃນແຕ່ລະຮູບແບບ. ໂດຍໃຫ້ປະຊາຊົນຄັດແຍກຂີ້ເຫຍື້ອເປັນ 2 ປະເພດຄື: ຂີ້ເຫຍື້ອທີ່ບໍ່ສາມາດຂາຍໄດ້ ແລະ ຂີ້ເຫຍື້ອທີ່ສາມາດຂາຍໄດ້ເພື່ອນໍາມາວິເຄາະຫາລາຍຮັບ ແລະ ຕົ້ນທຶນຂອງແຕ່ລະຮູບແບບເພື່ອກໍານົດຮູບແບບທີ່ເປັນທາງເລືອກ, ໂດຍຜົນການສຶກສາພົບວ່າຂີ້ເຫຍື້ອຄົວເຮືອນແມ່ນປະກອບດ້ວຍຂີ້ເຫຍື້ອທີ່ບໍ່ສາມາດຂາຍໄດ້ ແລະ ຂີ້ເຫຍື້ອທີ່ສາມາດຂາຍໄດ້ ແລະ ສາມາດກໍານົດຮູບແບບໃນການຈັດການຂີ້ເຫຍື້ອທີ່ເປັນໄປໄດ້ມີ 3 ຮູບແບບຄື: 1) ຮູບແບບເກົ່າ (ແມ່ນຮູບແບບການຈັດການຂີ້ເຫຍື້ອແບບເກົ່າ, ເຊິ່ງບໍ່ມີການຄັດແຍກຂີ້ເຫຍື້ອກ່ອນຖິ້ມ ແລະ ຜູ້ໃຊ້ບໍລິການຕ້ອງຈ່າຍຄ່າບໍລິການ 40,000 ກີບ/ເດືອນ), 2) ແຍກຂີ້ເຫຍື້ອເປັນ 2 ປະເພດ (ຂີ້ເຫຍື້ອທີ່ບໍ່ສາມາດຂາຍໄດ້ ແລະ ຂີ້ເຫຍື້ອທີ່ສາມາດຂາຍໄດ້), ແລ້ວເອົາຂີ້ເຫຍື້ອທີ່ສາມາດຂາຍໄດ້ໃຫ້ ຄບຕ ແລ້ວທາງ ຄບຕ ຈະໃຫ້ຖົງຢາງດໍາເພື່ອໃສ່ຂີ້ເຫຍື້ອທີ່ສາມາດຂາຍໄດ້ 4ຖົງ/ອາທິດ ແລະ ຫຼຸດຄ່າບໍລິການລົງ 33,000 ກີບ/ເດືອນ ແລະ 3) ແຍກຂີ້ເຫຍື້ອເປັນ 2 ປະເພດ, ແລ້ວເອົາຂີ້ເຫຍື້ອທີ່ສາມາດຂາຍໄດ້ໃຫ້ ຄບຕ ແລ້ວ ທາງ ຄບຕ ຈະບໍ່ໃຫ້ຖົງຢາງດໍາ ແລະ ຫຼຸດຄ່າບໍລິການລົງ 30,000 ກີບ/ເດືອນ. ປະຊາຊົນທັງສອງບ້ານແມ່ນມີຄວາມພໍໃຈຈ່າຍໃນ 3 ຮູບແບບແຕກຕ່າງກັນຄື: ບ້ານສີຖານເໜືອ ມີຄວາມພໍໃຈຈ່າຍໃນຮູບແບບທີ 1 ສູງກວ່າໝູ່ກວມເອົາ 40%, ສ່ວນບ້ານດົງຄໍາຊ້າງ ແມ່ນມີຄວາມພໍໃຈຈ່າຍໃນຮູບແບບທີ 2 ສູງກວ່າໝູ່ກວມເອົາ 42%, ເຊິ່ງເຫັນວ່າ ຖ້າຫາກໂຄງການຕົວແບບລັກສະນະນີ້ ໄດ້ຖືກຈັດຕັ້ງປະຕິບັດໃນແຕ່ລະບ້ານ ໃນນະຄອນຫຼວງວຽງຈັນ ໂດຍນໍາເອົາທາງເລືອກ ຫຼື ຮູບແບບໃນການຈັດການຂີ້ເຫຍື້ອໃນຄົວເຮືອນໄປນໍາໃຊ້ ຫຼື ຈັດຕັ້ງປະຕິບັດເປັນຕົວແບບໄດ້ ຈະເຮັດໃຫ້ເປັນວິທີການໜຶ່ງທີ່ຈະຊ່ວຍເຮັດໃຫ້ ການຖິ້ມຂີ້ເຫຍື້ອຊະຊາຍຕາມຈຸດຕ່າງໆໃນທົ່ວ ນະຄອນຫຼວງວຽງຈັນ ຫຼຸດລົງໄດ້ຫຼາຍສົມຄວນ.

## 5. ສະຫຼຸບ

ອ່າງຮັບນໍ້າ ຫ້ວຍໝາກຮຽວ, ນະຄອນຫຼວງວຽງຈັນ ເປັນສະຖານທີ່ມີຊັບພະຍາກອນທໍາມະຊາດອຸດົມສົມບູນ ແລະ ໃນຂະນະດຽວກັນນັ້ນ ນະຄອນຫຼວງວຽງຈັນ ເປັນ

ແຂວງໜຶ່ງທີ່ມີປະຊາກອນຈຳນວນຫຼາຍ ຈຶ່ງເຮັດໃຫ້ປະລິມານຂີ້ເຫຍື້ອໃນ ນະຄອນຫຼວງວຽງຈັນ ນັບມື້ນັບເພີ່ມຂຶ້ນ ໂດຍສະເພາະທີ່ພົບເຫັນສະພາບການຖິ້ມຂີ້ເຫື້ອຍແບບຊະຊາຍລວມມີ 155 ຈຸດ, ເມືອງທີ່ພົບຈຸດຖິ້ມຂີ້ເຫຍື້ອຫຼາຍທີ່ສຸດແມ່ນ ເມືອງໄຊເສດຖາ ພົບເຫັນເຂດບ້ານໂຊກໃຫ່ຍປະຊາຊົນໃນເຂດນັ້ນແມ່ນສ່ວນຫຼາຍບໍ່ໄດ້ໃຊ້ບໍລິການພົບເຫັນຕາມພື້ນທີ່ຫວ່າງເປົ່າ, ຖິ້ມຕາມແຄມຮ່ອງລະບາຍນ້ຳ, ຮອງລົງມາແມ່ນ ເມືອງສີໂຄດຕະບອງ ພົບເຫັນເຂດບ້ານໃໝ່, ບ້ານວຽງຄຳຈຳປາ (ທາງໄປຕາດມູນ) ປະຊາຊົນໃນເຂດນັ້ນສ່ວນຫຼາຍບໍ່ໄດ້ໃຊ້ບໍລິການພົບເຫັນຕາມປ່າເລົ່າແຄມທາງ, ພື້ນທີ່ເປົ່າຫວ່າງ ແລະ ເມືອງຈັນທະບູລີ ພົບເຫັນເຂດ ບ້ານໜອງທາ, ບ້ານໂພນຕ້ອງ, ສ່ວນຫຼາຍແມ່ນບໍ່ໄດ້ໃຊ້ບໍລິການ, ຮອງລົງມາອັນດັບ 3 ແມ່ນເມືອງຫາດຊາຍຟອງ ພົບເຫັນເຂດ ບ້ານດົງຄຳຊ້າງ, ບ້ານໜອງໄຮ່. ມີການຖິ້ມຂີ້ເຫຍື້ອຊະຊາຍຕາມຖະໜົນຫົນທາງ, ຮ່ອງນ້ຳ, ດິນວ່າງເປົ່າ, ປ່າເລົ່າ ແລະ ສະຖານທີ່ອື່ນໆ. ລັກສະນະຂອງການຖິ້ມຂີ້ເຫຍື້ອຂອງປະຊາຊົນນັ້ນ ມີການຖິ້ມຂີ້ເຫຍື້ອແບບຊະຊາຍຕາມແຄມທາງທີ່ຫ່າງຈາກຊຸມຊົນ, ແຄມນ້ຳ, ດິນເປົ່າຫວ່າງທົ່ວໄປ, ດິນວ່າງແຄມທາງໃຫຍ່, ປ່າເລົ່າແຄມທາງ ແລະ ສ່ວນຫຼາຍຈະພົບເຫັນຕາມທາງຮ່ອມບ້ານ, ທາງດິນແດງທີ່ມີດິນວ່າງ. ການຖິ້ມຂີ້ເຫຍື້ອມີລັກສະນະແບບຊະຊາຍ ກະຈາຍແຕ່ລະຈຸດເປັນກອງນ້ອຍ, ກອງໃຫ່ຍແຕກຕ່າງກັນໄປ, ຂີ້ເຫຍື້ອບາງກອງກໍ່ມີຮ່ອງຮອຍການຈູດ ແລະ ລັກສະນະຂອງແຕ່ລະເຂດກໍບໍ່ຄືກັນບາງບ້ານຖິ້ມຕາມແຄມນ້ຳ, ບາງບ້ານຖິ້ມຕາມດິນວ່າງ ແລະ ບາງບ້ານຖິ້ມຕາມປ່າເລົ່າແຄມທາງໃຫຍ່ ຫຼືແຄມຮົ້ວຕາມທາງດິນແດງທີ່ມີປ່າເລົ່າ. ຂີ້ເຫຍື້ອຂອງປະຊາຊົນທີ່ນຳໄປຖິ້ມພົບເຫັນຫຼາຍແມ່ນປ່າເລົ່າຫ່າງຈາກຊຸ່ມຊົນຂີ້ເຫຍື້ອບາງຈຸດຕ້ອງສັງເກດເບິ່ງຢ່າງລະອຽດ ເພາະມີຫຍ້າປົກຄຸມເຮັດໃຫ້ການແນມເຫັນຂີ້ເຫຍື້ອໄດ້ຍາກ. ສາເຫດຂອງການຖິ້ມລັກສະນະນີ້ແມ່ນຍ້ອນມີປະລິມານຂີ້ເຫຍື້ອໜ້ອຍ ແລະ ບໍ່ເໝາະສົມແກ່ການນຳໃຊ້ບໍລິການລົດຂົນສົ່ງຂີ້ເຫຍື້ອ ຈຶ່ງເຮັດໃຫ້ມີການລັກລອບຖິ້ມຂີ້ເຫຍື້ອຊະຊາຍຕາມຈຸດຕ່າງໆ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ຄຳຂອບໃຈ

ທີມງານໃນການສຶກສາຄັ້ງນີ້ ຂໍສະແດງຄວາມຂອບໃຈມາຍັງ ໂຄງການ The CounterMEASURES For Plastic Free River Phase II ທີ່ໄດ້ໃຫ້ການສະໜັບສະໜູນທາງດ້ານງົບປະມານ ແລະ ອຳນວຍຄວາມສະດວກໃນການປະຕິບັດຕົວຈິງຈົນປະສົບຜົນສຳເລັດ ແລະລຸລ່ວງໄປດ້ວຍດີ.

## 8. ເອກະສານອ້າງອີງ

ກົມສົ່ງເສີມຄຸນນະພາບສິ່ງແວດລ້ອມແຫ່ງປະເທດໄທ. (2009). ຜົນກະທົບຂອງຂີ້ເຫຍື້ອຕໍ່ສິ່ງແວດລ້ອມ.

ຫ້ອງການຄຸ້ມຄອງ ແລະ ບໍລິຫານຕົວເມືອງວຽງຈັນ. (2021). ສະຫຼຸບການໃຊ້ບໍລິການເກັບມ້ຽນຂີ້ເຫຍື້ອ ໃນ 9 ຕົວເມືອງ ປີ 2020. ນະຄອນຫຼວງວຽງຈັນ.

ສອນພະນິນ ແສງວິເດດ. (2013). ສຶກສາກ່ຽວກັບລະບົບການຈັດການຂີ້ເຫຍື້ອຂອງເທດສະບານເມືອງປາກເຊ ແຂວງຈຳປາສັກ. ບົດວິທະຍານິພົນ ປະລິນຍາໂທ ສາຂາ: ຄະນະສາດນຳໃຊ້, ຄະນະວິທະຍາສາດທຳມະຊາດ, ມະຫາວິທະຍາໄລແຫ່ງຊາດ.

ສະຖາບັນສິ່ງແວດລ້ອມຂອງປະເທດໄທ. (2013). ສຶກສາແຫຼ່ງກຳເນີດຂອງຂີ້ເຫຍື້ອ ແລະ ປະເພດຂີ້ເຫຍື້ອ.

ອົງການພັດທະນາ ແລະ ບໍລິຫານຕົວເມືອງວຽງຈັນ. (2010). ຄູ່ມືການຄຸມຄອງຂີ້ເຫຍື້ອແບບຄົວເຮືອນຢູ່ນະຄອນຫຼວງວຽງຈັນ. ສະໜັບສະໜູນໂດຍສະຖາບັນເຕັກໂນໂລຊີເອເຊຍແຫ່ງປະເທດໄທ ແລະ ສະຖາບັນໂຍທາທິການ ແລະ ຂົນສົ່ງ ສ ປປລາວ.

ສີສຸກ ທໍລະທາ .(2010). ການຄຸ້ມຄອງຂີ້ເຫຍື້ອ ຢູ່ໃນນະຄອນຫຼວງວຽງຈັນລະນີສຶກສາຄວາມພໍໃຈຈ່າຍຂອງປະຊາຊົນເຂດເມືອງໄຊເສດຖາ

ສຳນັກງານກອງທຶນສະໜັບສະໜູນ ແລະ ສົ່ງເສີມສຸຂະພາບ. (2009). ແນວຄວາມຄິດໃນການຈັດການຂີ້

ເຫຍື້ອ

ພັດທະກອນ ໂສພາວິໄລ. (2012). ສຶກສາກ່ຽວກັບປັດໃຈທີ່ມີຜົນກະທົບຕໍ່ຄວາມເພິ່ງພໍໃຈຈ່າຍໃນການຄຸ້ມຄອງຂີ້ເຫຍື້ອຢູ່ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ ກໍລະນີສຶກສາ: ເຂດບ້ານດົງໂພສີ, ທ່ານາແລ້ງ ແລະ ທ່າມ່ວງ. ບົດວິທະຍານິພົນປະລິນຍາໂທ ສາຂາ: ເສດຖະສາດການພັດທະນາ ແລະ ການວາງແຜນ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມຊ.

ພຸດມະນີ ສີອໍາພອນ.(2019). ການຈັດການຂີ້ເຫຍື້ອຄົວເຮືອນແບບຍືນຍົງ ໃນນະຄອນຫຼວງວຽງຈັນ. ບົດວິທະຍານິພົນປະລິນຍາໂທ ສາຂາ: ການວາງແຜນຄຸ້ມຄອງສິ່ງແວດລ້ອມໂຄງການ, ຄະນະວິທະຍາສາດສິ່ງແວດລ້ອມ, ມຊ.

ທິດສະພອນ ສຸພາລີ. (2005). ການປະເມີນຄ່າຄວາມເຕັມໃຈທີ່ຈະຈ່າຍຄ່າທໍານຽມກໍາຈັດຂີ້ເຫຍື້ອອັນຕະລາຍຈາກບ້ານເຮືອນໃນກຸງເທບມະຫານະຄອນ.

souksavanh et. (2008). ບັນຫາສິ່ງເສດເຫຼືອທີ່ເກີດຂຶ້ນຈາກການພັດທະນາ ແລະ ສິ່ງຜົນກະທົບ

ຕາຕະລາງທີ 01: ຈຸດຖິ້ມຂີ້ເຫຍື້ອໃນແຕ່ລະເມືອງ

| ລ/ດ | ຊື່ເມືອງ | ຈຸດຖິ້ມຂີ້ເຫຍື້ອໃນແຕ່ລະເມືອງ (ຈຸດ) | ສ່ວນຮ້ອຍ |
|---|---|---|---|
| 1 | ເມືອງໄຊເສດຖາ | 41 | 26 |
| 2 | ເມືອງສີໂຄດຕະບອງ | 35 | 23 |
| 3 | ເມືອງຈັນທະບູລີ | 35 | 23 |
| 4 | ເມືອງຫາດຊາຍຟອງ | 29 | 19 |
| 5 | ເມືອງສີສັດຕະນາກ | 6 | 4 |
| 6 | ເມືອງປາກງື່ມ | 4 | 3 |
| 7 | ເມືອງໄຊທານີ | 3 | 2 |
| 8 | ເມືອງນາຊາຍທອງ | 2 | 1 |
| 9 | ເມືອງສັງທອງ | 0 | 0 |
| | ລວມ | 155 | 100 |




ຮູບທີ 01: ຂອບເຂດພື້ນທີ່ສຶກສາ ແລະ ເສັ້ນທາງການສຳຫຼວດຈຸດຖິ້ມຂີ້ເຫຍື້ອ






ຮູບທີ 04: ສະພາບການຖິ້ມຂີ້ເຫຍື້ອເມືອງໄຊເສດຖາ

